| ລາຍລະອຽດຂໍ້ມູນທີ່ໄດ້ຮັບ | | |
|---|---|---|
| ຊື່ໃບອະນຸຍາດ | ໃບອະນຸຍາດດຳເນີນທຸລະກິດຂົນສົ່ງໂດຍສານ | |
| ປະເພດຂອງໃບອະນຸຍາດ | ໃບອະນຸຍາດດຳເນີນທຸລະກິດ | |
| ເລກລະຫັດໃບອະນຸຍາດ | ວັນທີ | ໜ່ວຍງານຮັບຜິດຊອບ |
| VCPG-PWTD-11 | 12.01.2018 | ພະແນກໂຍທາທິການ ແລະ ຂົນສົ່ງ, ນະຄອນຫລວງວຽງຈັນ |

| ຂໍ້ມູນພື້ນຖານ | |
|---|---|
| ຮູບແບບການສົ່ງຄຳຮ້ອງ | ຢູ່ທີ່ຫ້ອງການເຈົ້າໜ້າທີ່ |
| ປະເພດທຸລະກິດ ສະເພາະ ທີ່ຕິດພັນກັບ ໃບອະນຸຍາດ | H - ການຂົນສົ່ງ ແລະ ສາງສິນຄ້າ |
| ຈຸດປະສົງທີ່ຕ້ອງຂໍ ໃບອະນຸຍາດ | ເນື່ອງຈາກ ຕາມກົດໝາຍກ່ຽວຂ້ອງ ຜູ້ດຳເນີນການຂົນສົ່ງໂດຍສານມີພັນທະໃນການສົ່ງຜູ້ໂດຍສານ ລວມທັງ ຮັບຜິດຕໍ່ຄວາມບາດເຈັບ, ຄວາມສ່ຽງ ຫຼື ການເສຍຊີວິດຂອງຜູ້ໂດຍສານ ດັ່ງນັ້ນ, ຈຶ່ງມີຄວາມຈຳເປັນຕ້ອງຄຸ້ມຄອງ ການບໍລິການດັ່ງກ່າວ ດ້ວຍການອອກໃບອະນຸຍາດ ນີ້ ທັງເພື່ອຮັບປະກັນຄຸນນະພາບ ແລະ ຫລຸດຜ່ອນຄວາມສ່ຽງທີ່ອາດເກີດຂຶ້ນ |
| ຜູ້ທີ່ຕ້ອງຂໍໃບອະນຸຍາດ | ບຸກຄົນ ຫຼື ນິຕິບຸກຄົນ ທີ່ມີຈຸດປະສົງດຳເນີນທຸລະກິດຂົນສົ່ງຜູ້ໂດຍສານ ຄື: ການເຄື່ອນຍ້າຍ ຜູ້ໂດຍສານ ຈາກຈຸດໜຶ່ງ ໄປຫາອີກຈຸດໜຶ່ງ ດ້ວຍຍານພາຫະນະຂົນສົ່ງ ທັງການຂົນສົ່ງຜູ້ໂດຍສານ ປະຈຳທາງ ແລະ ບໍ່ປະຈຳທາງ ທັງທີ່ເປັນການຂົນສົ່ງໂດຍສານ ພາຍໃນປະເທດ (ລະຫວ່າງເມືອງ-ແຂວງ) ແລະ ລະຫວ່າງປະເທດ |
| ມີຂໍ້ມູນໃບອະນຸຍາດ ອອນລາຍບໍ່? | ບໍ່ມີ |
| ທີ່ຢູ່ຂອງຂໍ້ມູນອອນລາຍ | |
| ມີແບບຟອມໃບຄຳຮ້ອງ ໃບອະນຸຍາດ ຫລືບໍ່? | ແມ່ນແລ້ວ |
| ຄຳເຫັນອື່ນ ທີ່ຕິດພັນ ກັບ ໃບອະນຸຍາດ | |

| ຄຸນະສົມບັດ ແລະ ເອກະສານປະກອບ |
|---|

| ຄຸນະສົມບັດ ແລະ ເອກະສານປະກອບ | | |
|---|---|---|
| **ໄລຍະເວລາໃນການພິຈາລະນາຄຳຮ້ອງ ໃນການອອກໃບອະນຸຍາດ** | 15 | ກົດໝາຍກ່ຽວຂ້ອງ ບໍ່ໄດ້ລະບຸໄລຍະເວລາໃນການພິຈາລະນາໄວ້ ແຕ່ເຈົ້າໜ້າທີ່ແຈ້ງວ່າ ໄລຍະເວລາໃນການພິຈາລະນາປົກກະຕິ ແມ່ນບໍ່ກາຍ 15 ວັນລັດຖະການ |
| **ຄຸນະສົມບັດຂອງຜູ້ຂໍໃບອະນຸຍາດ** | 1. ຕ້ອງໄດ້ຮັບອະນຸຍາດໃຫ້ແລ່ນລົດໃນສາຍທາງໃດໜຶ່ງ ຈາກ ພະແນກໂຍທາທິການ ແລະ ຂົນສົ່ງ ຕົ້ນທາງ ພາຍຫລັງໄດ້ຮັບການຄົ້ນຄວ້າ ແລະ ເຫັນດີຈາກຄະນະຄຸ້ມຄອງສາຍທາງ 2. ຕ້ອງມີວິຊາການຮຽນຈົບດ້ານການຂົນສົ່ງ ຊັ້ນສູງ ຈຳນວນ 2 ຄົນ, ໃນນັ້ນ 1 ຄົນຕ້ອງມີ ປະສົບການດ້ານການຂົນສົ່ງໂດຍສານ ຢ່າງໜ້ອຍ 5 ປີ 3. ຕ້ອງມີທຶນຈົດທະບຽນຢ່າງຕ່ຳ 1 ຕື້ກີບ ສຳລັບ ການຂົນສົ່ງພາຍໃນປະເທດ ແລະ 3 ຕື້ກີບ ສຳລັບ ການຂົນສົ່ງລະຫວ່າງປະເທດ 4. ກໍລະນີການຂົນສົ່ງໂດຍສານລະຫວ່າງປະເທດ, ຕ້ອງແມ່ນບໍລິສັດຂົນສົ່ງໂດຍສາຍພາຍໃນ ທີ່ເຄື່ອນໄຫວຢ່າງມີປະສິດທິຜົນມາແລ້ວ ຢ່າງໜ້ອຍ 3 ປີ 5. ຕ້ອງມີລົດຂົນສົ່ງ ຢ່າງຕ່ຳ 5 ຄັນ ສຳລັບ ການຂົນສົ່ງໂດຍສາຍພາຍໃນປະເທດ ຫລື ມີຈຳນວນພຽງພໍ ຕາມທີ່ໄດ້ຕົກລົງກັນກັບຕ່າງປະເທດ ສຳລັບ ການຂົນສົ່ງໃນສາຍທາງຕ່າງປະເທດ 6. ແມ່ນທຸລະກິດທີ່ສະຫງວນໄວ້ ສະເພາະຄົນລາວ ດັ່ງນັ້ນ, ຕ່າງປະເທດບໍ່ສາມາດຖືຮຸ້ນໃນວິສາຫະກິດນີ້ໄດ້ | |
| **ມີເຫດຜົນໃດບໍ່ທີ່ເຈົ້າໜ້າທີ່ ຈະປະຕິເສດການຂໍໃບອະນຸຍາດ?** | ປະຕິເສດກໍລະນີຜູ້ຮ້ອງຂໍບໍ່ມີຄຸນສົມບັດ ຫລື ບໍ່ສາມາດປະຕິບັດ ຕາມເງື່ອນໄຂທີ່ລະບຸໄວ້ | |

| ຂໍ້ມູນຕິດພັນກັບ ການຕໍ່ອາຍຸໃບອະນຸຍາດ | |
|---|---|
| **ໃບອະນຸຍາດມີກຳນົດອາຍຸ ຫລືບໍ່?** | **ໃບອະນຸຍາດມີອາຍຸນຳໃຊ້ ຈັກເດືອນ?** |
| ແມ່ນແລ້ວ | 12 |
| **ຂັ້ນຕອນ ແລະ ເງື່ອນໄຂ ສຳລັບການຕໍ່ອາຍຸໃບອະນຸຍາດ** | ອາຍຸໃບອະນຸຍາດແມ່ນ 12 ເດືອນປະຕິທິນ ຊຶ່ງຈະໝົດກຳນົດໃນ 31 ທັນວາ ແລະ ຕ້ອງໄດ້ຕໍ່ອາຍຸ ບໍ່ວ່າຈະໄດ້ຮັບໃບອະນຸຍາດດັ່ງກ່າວ ໃນເດືອນໃດ |

| ຄ່າທຳນຽມ | | | | |
|---|---|---|---|---|
| **ມີຄ່າທຳນຽມແບບຟອມຄຳ ຮ້ອງ ຫລື ບໍ່?** | **ຄ່າບໍລິການວິຊາການ** | **ຄ່າທຳນຽມ** | **ຄ່າແບບຟອມຄຳຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ແມ່ນແລ້ວ | 0.00 | 200000.00 | 0.00 | 200000.00 |

| **ຄ່າທຳນຽມ** | |
|---|---|
| **ຄຳເຫັນ** | ອີງຕາມ ລັດຖະບັນຍັດປະທານປະເທດ ເລກທີ 03/ປທ |

| **ຄ່າທຳນຽມການຕໍ່ອາຍຸ** | | | | |
|---|---|---|---|---|
| **ມີຄ່າທຳນຽມ ແບບຟອມ ຄຳຮ້ອງ ຂໍຕໍ່ອາຍຸ ຫລືບໍ່?** | **ຄ່າບໍລິການວິຊາການ** | **ຄ່າທຳນຽມ** | **ຄ່າ ແບບຟອມ ຄຳຮ້ອງ** | **ຄ່າໃຊ້ຈ່າຍທັງໝົດ** |
| ແມ່ນແລ້ວ | 0.00 | 200000.00 | 0.00 | 200000.00 |
| **ຄຳເຫັນ** | ອີງຕາມ ລັດຖະບັນຍັດປະທານປະເທດ ເລກທີ 03/ປທ | | | |

| **ກົດລະບຽບທີ່ກ່ຽວຂ້ອງ** | | | |
|---|---|---|---|
| **ຊື່ກົດລະບຽບ** | **ເລກທີ** | **ວັນທີ** | **ຄຳເຫັນ** |
| ແຈ້ງການປະກອບຄຳເຫັນຕໍ່ຮ່າງແຈ້ງການກ່ຽວກັບ ບັນຊີ ແລະ ເງື່ອນໄຂການລົງທຶນໃນຂະແໜງຂົນສົ່ງ | 12059/ກຂສ | 24.09.2008 | |
| ກົດໝາຍວ່າດ້ວຍ ຂົນສົ່ງທາງບົກ (ສະບັບປັບປຸງ) | 24/ສພຊ | 12.12.2012 | ພາກທີ III: ການດຳເນີນທຸລະກິດກ່ຽວກັບການຂົນສົ່ງທາງບົກ ມາດຕາ 23 - ມາດຕາ 27 |
| ລະບຽບການໃນການອະນຸຍາດສ້າງຕັ້ງທຸລະກິດຄວບຄຸມ ໃນຂະແໜງໂຍທາທິການ ແລະ ຂົນສົ່ງ | 13779/ຍທຂ | 21.08.2015 | |

| **ເອກະສານປະກອບ** |
|---|
| **ຊື່ເອກະສານ** |
| ບົດລາຍງານການເຄື່ອນໄຫວທຸລະກິດ |
| ໃບທະບຽນວິສາຫະກິດ ຂອງບໍລິສັດຈຳກັດ |
| ຮູບຖ່າຍຂອງອຳນວຍການ |
| ໃບຢັ້ງຢືນການມອບພັນທະອາກອນປະຈຳປີ |

| ສະຖິຕິ (ທີ່ອອກໃໝ່ ຫລື ທີ່ຕໍ່ອາຍຸ) | | |
|---|---|---|
| ປີ | ອອກໃໝ່ | ຕໍ່ອາຍຸ |
| 2017 | 0 | 28 |
| 2016 | 0 | 41 |